ຂະນະທີ່ແຜນທີ່ນີ້ສະແດງໃຫ້ເຫັນການສະໜັບສະໜູນຂອງແຜນງານຮ່ວມຂອງຄູ່ຮ່ວມພັດທະນາເອີຣົບ ສ່ວນໃຫຍ່ແມ່ນຖືກລາຍງານຢູ່ນະຄອນຫຼວງວຽງຈັນ, ໂຄງການທັງໝົດນີ້ແມ່ນປົກຄຸມທົ່ວປະເທດ ແລະ ມີການຈັດຕັ້ງປະຕິບັດໃນລະດັບແຍກຂັ້ນຄຸ້ມຄອງ.






ບັນດາກິດຈະກຳຕ່າງໆ ພາຍໃຕ້ໂຄງການທີ່ໄດ້ແນ່ໃສ່ການປະກັນການປ້ອງກັນສຸຂະພາບທາງສັງຄົມ ແລະ ການປັບປຸງການຄຸ້ມຄອງທາງການເງິນຢູ່ຂັ້ນສະຖານທີ່ບໍລິການ ໄດ້ປະກອບສ່ວນອັນລ້ຳຄ່າເຂົ້າໃນຄວາມພະຍາຍາມຂອງກະຊວງສາທາລະນະສຸກ ໃນການຈັດຕັ້ງປະຕິບັດການປະຕິຮູບຂອງຂະແໜງການສາທາລະນະສຸກ - **ດຣ. ກິດໄຊທູນ ພົມມະສອນ, ຮອງຫົວໜ້າກົມການເງິນ, ກະຊວງສາທາລະນະສຸກ, ສປປ ລາວ**

## ຈຸດສຸມ

ຈຸດສຸມການຂະຫຍາຍການປົກ ຖຸມດ້ານປະກັນສຸຂະພາບທີ່ ແກ່ປະຊາກອນຂອງ ສປປ ລາວ

ໃນການສະໜັບສະໜູນເປົ້າໝາຍການປົກຖຸມສຸຂະພາບທົ່ວປວງຊົນໃນ ສປປ ລາວ, ໂຄງການທີ່ມີ ມູນຄ່າຈຳນວນ 900,000 ເອີໂຣ ສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດວຽກງານປະກັນ ສຸຂະພາບ ແລະ ການຄຸ້ມຄອງທາງການເງິນຢູ່ຂັ້ນທ້ອງຖິ່ນ.

### ຈຸດປະສົງ

- ເພີ່ມທະວີການເຂົ້າເຖິງການປິ່ນປົວສຸຂະພາບຂັ້ນພື້ນຖານທີ່ມີຄຸນນະພາບ ເຊິ່ງລວມມີການຂະຫຍາຍການປະກັນສຸຂະພາບຂອງປະຊາຊົນໃຫ້ຫຼາຍຂຶ້ນ ໂດຍການລວບລວມເອົາລະບົບປ້ອງກັນສຸຂະພາບທາງສັງຄົມຕ່າງໆ.
- ປັບປຸງການລາຍງານທາງການເງິນ ແລະ ການຄຸ້ມຄອງງົບປະມານສາທາລະນະສຸກ ແລະ ລາຍຮັບວິຊາການຢູ່ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ສະຖານທີ່ບໍລິການສາທາລະນະສຸກ.

### ຜົນກະທົບ

- ຍຸດທະສາດການປະກັນສຸຂະພາບແຫ່ງຊາດ 2017-2020 ໄດ້ຮັບການພັດທະນາ.
- ຫ້ອງການປະກັນສຸຂະພາບຈຳນວນ 6 ແຫ່ງ ໄດ້ຮັບການປັບປຸງ ແລະ ສະໜອງອຸປະກອນເຊັ່ນ ຄອມພິວເຕີ ແລະ ການເຂົ້າເຖິງອິນເຕີເນັດ.
- ກອງປະຊຸມປະຈຳໄຕມາດກ່ຽວກັບການຄຸ້ມຄອງການປະກັນສຸຂະພາບໄດ້ຮັບການສະໜັບສະໜູນ ຈຳນວນ 24 ຄັ້ງຢູ່ເຂດເປົ້າໝາຍ.
- ບຸກຄະລາກອນຈຳນວນຫຼາຍກວ່າ 70 ຄົນ ໄດ້ຮັບການຝຶກອົບຮົມຊ້ຳອີກກ່ຽວກັບການລາຍງານທາງການເງິນ.

ຮູບໜ້າປົກຕາມທິດເຂັມໂມງຈາກຂວາສຸດດ້ານເທິງ: ພະຍາບານຢູ່ໂຮງໝໍແຂວງທີ່ໄດ້ຮັບການປັບປຸງດ້ວຍທຶນຊ່ວຍເຫຼືອຈາກລຸກຊຳບວກ @LuxDev. ການຕິດຕາມການຈະເລີນເຕີບໂຕຂອງເດັກຢູ່ແຂວງຜົ້ງສາລີ @EU/Koen Everaert ບ່ອນປະເມີນເດັກນ້ອຍໂດຍພະຍຸງຄັນ @UNICEF. ແຜນພາບຕິດຕາມການຈະເລີນເຕີບໂຕ @UNICEF.

ສັງລວມຫຍໍ້

ແຜນງານຮ່ວມຂອງຄູ່ຮ່ວມພັດທະນາເອີຣົບ ສຳລັບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ 2016-2020

# ສາທາລະນະສຸກ



## ຈຸດປະສົງລວມ

ທັງຝ່າຍລັດຖະບານແຫ່ງ ສປປ ລາວ ແລະ ບັນດາຄູ່ຮ່ວມພັດທະນາເອີຣົບ ເນັ້ນໜັກໃສ່ການເຂົ້າເຖິງການບໍລິການສາທາລະນະສຸກທີ່ມີຄຸນນະພາບສູງ ແລະ ການແພດໂດຍເນັ້ນໃສ່ການປ້ອງກັນ. ບັນດາຄູ່ຮ່ວມພັດທະນາສະໜັບສະໜູນ ການເຂົ້າເຖິງການບໍລິການສາທາລະນະສຸກ ຢ່າງທົ່ວເຖິງ ສຳລັບທຸກຄົນໃນ ສປປ ລາວ ໂດຍຜ່ານລະບົບສາທາລະນະສຸກທີ່ເຂັ້ມແຂງ ແລະ ມີຄຸນນະພາບທີ່ໄດ້ຮັບການປັບປຸງ ລວມທັງການເຂົ້າເຖິງການບໍລິການທີ່ສະເໝີພາບ ຂອງປະຊາຊົນໝົດທຸກຄົນ.

ເນື່ອງຈາກການພັດທະນາການບໍລິການສາທາລະນະສຸກ ເປັນອົງປະກອບອັນສຳຄັນສຳລັບການຂະຫຍາຍຕົວຢ່າງເທົ່າທຽມກັນ ແລະ ຍືນຍົງ ລວມທັງການຫຼຸດຜ່ອນຄວາມທຸກຍາກ, ຄູ່ຮ່ວມພັດທະນາເອີຣົບ ແລະ ລັດຖະບານແຫ່ງ ສປປ ລາວ ມີຈຸດປະສົງ~~ເພື່ອ~~ເພີ່ມທະວີການເຂົ້າເຖິງ ແລະ ຄຸນນະພາບຂອງການບໍລິການສາທາລະນະສຸກ ແກ່ຜູ້ທຸກຍາກຢູ່ເຂດຫ່າງໄກສອກຫຼີກ.

**ຈຸດປະສົງສະເພາະ**

## SO 1 - ສ້າງຄວາມ ເຂັ້ມແຂງໃຫ້ ແລະ ບົບສາທາລະນະສຸກໃນ ສປປ ລາວ

ຮັບປະກັນການເຂົ້າເຖິງ ການບໍລິການສາທາລະນະສຸກທີ່ມີຄຸນນະພາບ, ໂດຍສະເພາະຢູ່ຂັ້ນທ້ອງຖິ່ນ ແລະ ຫ່າງໄກສອກຫຼີກ ໂດຍຜ່ານການຍົກສູງການຮ່ວມມືກັນລະຫວ່າງລະບົບສາທາລະນະສຸກທັງໃນລະບົບ ແລະ ນອກລະບົບ/ຊຸມຊົນໃຫ້ເຂັ້ມແຂງ, ການສະໜັບສະໜູນແມ່ນຈະສະໜອງໃຫ້ແກ່:

- ການສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດ
- ການສ້າງລະບົບປະກັນສຸຂະພາບ ແລະ ປະກັນສຸຂະພາບ
- ການຝຶກອົບຮົມບຸກຄະລາກອນບໍລິຫານສາທາລະນະສຸກລະດັບກາງ ເພື່ອຮັກສາ ແລະ ປັບປຸງການສະໜອງການບໍລິການ
- ການປັບປຸງດ້ານຄຸນນະພາບການສຶກສາ ແລະ ຝຶກອົບຮົມໃຫ້ພະນັກງານສາທາລະນະສຸກ ແລະ ຄວາມສາມາດຂອງຄູອາຈານ ແລະ ນັກຄົ້ນຄ້ວາ

ນອກຈາກນີ້,ງົບປະມານດ້ານສາທາລະນະສຸກທີ່ຂາດເຂີນຢ່າງຮຸນແຮງຂອງ ສປປ ລາວ ມີຜົນກະທົບໂດຍກົງຕໍ່ການບໍລິການ.

ໃນຂະນະທີ່ການສະໜອງທຶນຂອງລັດຖະບານໃນວຽກງານສາທາລະນະສຸກມີການເພີ່ມຂຶ້ນຢ່າງຫຼວງຫຼາຍ, ການໃຊ້ຈ່າຍພາກລັດ ຕໍ່ຫົວຄົນຍັງຕໍ່າທີ່ສຸດໃນພາກພື້ນ ແລະ ເປົ້າໝາຍຂອງຍຸດທະສາດການປະຕິຮູບ ຂະແໜງສາທາລະນະສຸກຈຳນວນໜຶ່ງຍັງບໍ່ທັນບັນລຸໄດ້. ນອກຈາກນີ້, ການເພິ່ງພາທຶນຊ່ວຍເຫຼືອ ແລະ ການສະໜັບສະໜູນທາງວິຊາການຈາກຕ່າງປະເທດ ຍັງຄົງມີສູງຫຼາຍສຳລັບຫຼາຍໆ ແຜນງານ.

ການເພິ່ງພາທຶນຊ່ວຍເຫຼືອ ແລະ ການສະໜັບສະໜູນທາງວິຊາການຈາກຕ່າງປະເທດ




ລາຍຈ່າຍຂອງລັດຖະບານສຳລັບສາທາລະນະສຸກ

| | |
|---|---|
| 2010 | 3.7% |
| 2017 | 5.9% |

## SO 2 - ປັບປຸງການເຂົ້າເຖິງ ແລະ ຄຸນນະພາບການຮັກສາສຸຂະພາບຂອງ ແມ່ ແລະ ເດັກ

ເພື່ອປັບປຸງສະພາບດ້ານສາທາລະນະສຸກ ທົ່ວໄປຂອງປະຊາຊົນ ສປປ ລາວ, ຄູ່ຮ່ວມພັດທະນາເອີຣົບສະໜັບສະໜູນ:

- ນະໂຍບາຍຂອງລັດຖະບານກ່ຽວກັບການຮັກສາສຸຂະພາບຂອງແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ໂດຍບໍ່ເສຍຄ່າບໍລິການເຊິ່ງລວມມີການຊ່ວຍເຫຼືອດ້ານຄ່າໃຊ້ຈ່າຍໃຫ້ແກ່ປະຊາຊົນຜູ້ທີ່ມາໃຊ້ບໍລິການ ເຊິ່ງມັນໄດ້ສົ່ງຜົນເຮັດໃຫ້ມີການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບຫຼາຍຂຶ້ນ
- ການຝຶກອົບຮົມໃຫ້ພະຍາບານພະດຸງຄັນ, ເຊິ່ງມີການຝຶກ ແລະປະຕິບັດຕົວຈິງໃຫ້ຫຼາຍຂຶ້ນ ເພື່ອປັບປຸງຄຸນນະພາບຂອງການບໍລິການ
- ການເຂົ້າເຖິງ ແລະ ການນຳໃຊ້ການບໍລິການ, ເຊິ່ງລວມມີການລົງໃຫ້ບໍລິການຢູ່ເຂດຫ່າງໄກສອກຫຼີກໃຫ້ຫຼາຍຂຶ້ນ ທີ່ຄຳນຶງເຖິງບັນຫາຄວາມຕ້ອງການດ້ານພາສາ ແລະ ວັດທະນະທຳຂອງກຸ່ມຊົນເຜົ່າ
- ການເພີ່ມຄວາມຮັບຜິດຊອບຂອງຜູ້ໃຫ້ບໍລິການດ້ານສາທາລະນະສຸກ ເພື່ອຍົກສູງຄວາມເຊື່ອໝັ້ນໃຫ້ກັບຜູ້ໃຊ້ບໍລິການລະບົບໃນລະບົບສາທາລະນະສຸກໃຫ້ຫຼາຍຂຶ້ນ
- ການແກ້ໄຂພາວະການຂາດໂພຊະນາການ ເນື່ອງຈາກເປັນປັດໄຈຕົ້ນຕໍທີ່ສົ່ງຜົນກະທົບຕໍ່ສຸຂະພາບຂອງແມ່ ແລະ ເດັກ

## ຂໍ້ມູນຫຼ້າສຸດ

ລັດຖະບານໄດ້ດຳເນີນບາດກ້າວທີ່ສຳຄັນໃນການຈັດບູລິມະສິດວຽກງານສຸຂະພາບໄວຈະເລີນ ພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ (RMNCH)

ອັດຕາການຕາຍຂອງເດັກ <1 ປີ (ຕໍ່ 1,000 ຄົນທີ່ເກີດມີຊີວິດ)

| | |
|---|---|
| 2012 | 68 |
| 2017 | 40 |

ອັດຕາການຕາຍຂອງເດັກ <1 ປີ (ຕໍ່ 1,000 ຄົນທີ່ເກີດມີຊີວິດ)

| | |
|---|---|
| 2012 | 79 |
| 2017 | 46 |

ອັດຕາສ່ວນຂອງການມາຮັບບໍລິການຜູ້ປ່ວຍນອກ (ຕໍ່ 1,000 ຄົນ)

| | |
|---|---|
| 2011 | 438 |
| 2017 | 705 |

ອັດຕາການສັກຢາກັນພະຍາດ: ຄໍຕີບ, ໄອໄກ່, ບາດທະຍັກ (DPT3)




ອັດຕາການສັກຢາກັນພະຍາດ: ໝາກແດງໃຫຍ່




## ການປະກອບສ່ວນຂອງແຜນງານຮ່ວມເຂົ້າໃນຂະແໜງການນັບແຕ່ປີ 2016 ຫາ 2020

ຄູ່ຮ່ວມພັດທະນາຂອງແຜນງານຮ່ວມໄດ້ພາກັນສະໜັບສະໜູນການປັບປຸງທີ່ສຳຄັນໃນຂະແໜງການ ແລະ ມາດຕະການຕ່າງໆຂອງພວກເຂົາແມ່ນສອດຄ່ອງກັບບູລິມະສິດຂອງລັດຖະບານ.

**ອີຢູ ແລະ ລຸກຊໍາບວກ** ເຊື່ອມສານເອົາອົງປະກອບທາງດ້ານການສ້າງຄວາມເຂັ້ມແຂງທີ່ນອນຢູ່ໃນ ໂຄງການທີ່ຄົບຖ້ວນສົມບູນຂອງພວກເຂົາເຂົ້າໃນວຽກງານການປົກຄອງລະບົບສາທາລະນະສຸກຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ.

**ຝຣັ່ງ** ສະໜັບສະໜູນກົນໄກການປະສານງານລະດັບຊາດຂອງກອງທຶນໂລກ (Global Fund).

**ລຸກຊໍາບວກ, ອີຢູ** ແລະ **ອຽກລັງ** ໄດ້ຮ່ວມກັນສ້າງຕັ້ງການຮ່ວມມືກັນໃນວຽກງານການປົກຄຸມສຸຂະພາບທົ່ວປວງຊົນຮ່ວມກັບ WHO.

**ອີຢູ, ຝຣັ່ງ** ແລະ **ລຸກຊໍາບວກ** ສະໜັບສະໜູນການຄົ້ນຄວ້າ ແລະ ການພັດທະນາ ໂດຍການສະໜອງທຶນເພື່ອການສຶກສາ, ການສ້າງຄວາມເຂັ້ມແຂງ ແລະ ການພັດທະນາທຶນທາງດ້ານຊັບພະຍາກອນມະນຸດ.

**ລຸກຊໍາບວກ** ໃຫ້ທຶນຊ່ວຍເຫຼືອແກ່ອົງການ UNICEF, UNFPA ແລະ WHO ສໍາລັບແຜນງານດ້ານສຸຂະພາບ ແມ່ ແລະ ເດັກ.

**ອີຢູ, ຝຣັ່ງ** ແລະ **ລຸກຊໍາບວກ** ພວມ ແກ້ໄຂບັນຫາສຸຂະພາບແມ່ ແລະ ເດັກ ຢູ່ເຂດຫ່າງໄກສອກຫຼີກໂດຍຜ່ານການສະໜັບສະໜູນອົງການຈັດຕັ້ງທາງສັງຄົມ. ແຜນງານສະໜັບສະໜູນຂະແໜງສາທາລະນະສຸກ ລາວ - ລຸກຊໍາບວກ (LAO 027) ດຳເນີນການແກ້ໄຂວຽກງານຂອງຂະແໜງການສາທາລະນະສຸກ ຢ່າງມີລັກສະນະສົມບູນ ແລະ ຄົບຖ້ວນ, ນັບແຕ່ການພັດທະນາຊັບພະຍາກອນມະນຸດຈົນໄປເຖິງ, ກົນໄກການສະໜອງການເງິນສາທາລະນະສຸກແບບໃໝ່, ພື້ນຖານໂຄງລ່າງ, ລະບົບຂໍ້ມູນຂ່າວສານ, ແລະ ການສ້າງຄວາມເຂັ້ມແຂງຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ ຂອງລັດຖະບານແຫ່ງ ສປປ ລາວ.

**ສະຫະຣາຊະອານາຈັກອັງກິດ** ສະໜັບສະໜູນການສ້າງຄວາມເຂັ້ມແຂງ ເພື່ອການເຝົ້າລະວັງການຕ້ານຂອງເຊື້ອພະຍາດຕໍ່ຢາ (AMR) ຜ່ານກອງທຶນເຟລມມິ້ງ (Fleming Fund) ທີ່ໄດ້ຮັບການຈັດຕັ້ງປະຕິບັດໂດຍບໍລິສັດ Mott MacDonald.